# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-08 ມິຖຸນາ 2022
ປີທີ 11
ສະບັບທີ 849


## ປະທານ ສພຊ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງຫົວໜ້າໂຄສະນາຈັດຕັ້ງສູນກາງພັກກອມມູນິດຫວຽດນາມ



(ສພຊ) ວັນທີ 31 ພຶດສະພາຜ່ານມາ, ທີ່ຫ້ອງຮັບແຂກສະພາແຫ່ງຊາດ ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ນາງ ເຈື່ອງ ທີ ມາຍ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າໂຄສະນາຈັດຕັ້ງສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມ ຢາມພົບປະ ແລະ ເຮັດວຽກຢູ່ ສປປລາວ ຢ່າງເປັນທາງການ.

ໂອກາດດັ່ງກ່າວ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ກ່າວສະແດງຄວາມຕ້ອນຮັບອັນອົບອຸ່ນຕໍ່ສະຫາຍ ນາງ ເຈື່ອງ ທີ ມາຍ ທີ່ເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ເປັນການນຳເອົາໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງສະໜິດສະໜົມສະຫາຍອ້າຍນ້ອງມາສູ່ປະຊາຊົນລາວ ໃນໂອກາດປີສາມັກຄີມິດຕະພາບລາວ-ຫວຽດນາມ-ລາວ ໃນປີ 2022, ເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງປະຊາຊົນສອງຊາດ ລາວ-ຫວຽດນາມ; ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດການພົບປະລະຫວ່າງຄະນະຈັດຕັ້ງສູນກາງພັກປະຊາຊົນປະຕິວັດລາວ ແລະ ຄະນະຈັດຕັ້ງສູນກາງພັກກອມມູນິດຫວຽດນາມ ໃນຕອນເຊົ້າວັນດຽວກັນ ເຊິ່ງທັງສອງຝ່າຍໄດ້ຕີລາຄາຄືນການພົວພັນ ແລະ ການຮ່ວມມືນຳກັນ ໃນໄລຍະຜ່ານມາ ແລະ ຮ່ວມກັນປຶກສາຫາລື ກ່ຽວກັບທິດທາງຮ່ວມມືນຳກັນ ໃນຕໍ່ໜ້າ; ຕີລາຄາສູງ ຕໍ່ການພົວພັນຮ່ວມມືລາວ-ຫວຽດນາມ ໃນທຸກຂົງເຂດສືບຕໍ່ໄດ້ຮັບການເສີມຂະຫຍາຍທັງທາງກວ້າງ

ອ່ານຕໍ່ໜ້າ 2

## ແຈ້ງການ
## ຄະນະເລຂາທິການສະພາແຫ່ງຊາດ

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງພະນັກງານ, ທະຫານ-ຕຳຫລວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າທົ່ວປະເທດ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ຈະໄດ້ຈັດຂຶ້ນແຕ່ວັນທີ 13 ມິຖຸນາ ຫາ 8 ກໍລະກົດ 2022 ທີ່ຫໍສະພາແຫ່ງຊາດ, ນະຄອນຫລວງວຽງຈັນ.

ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ໃນຄັ້ງນີ້ ແມ່ນປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ແລະ ປະຕິບັດຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 137/ຄປຈ, ລົງວັນທີ 13 ພຶດສະພາ 2022.

## ຖະແຫລ່ງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX



(ສພຊ) ໃນຕອນບ່າຍຂອງວັນທີ 2 ມິຖຸນາ 2022 ທີ່ສະພາແຫ່ງຊາດ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການຄະນະປະຈຳ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫລ່ງຂ່າວຕໍ່ສື່ມວນຊົນທຸກຂະແໜງການກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໂດຍຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2020) ໃນການກະກຽມ ແລະ ຮຽກໂຮມກອງປະຊຸມສະໄໝສາມັນສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 137/ຄປຈ, ລົງວັນທີ 13/5/2022 ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX. ເພື່ອປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງໄດ້ປະສານສົມທົບກັບບັນ

ອ່ານຕໍ່ໜ້າ 3

## ກຳມະບານສະພາແຫ່ງຊາດ ສະຫລຸບຂໍ້ແຂ່ງຂັນ 5 ເປັນເຈົ້າ




(ສພຊ) ວັນທີ 30 ພຶດສະພາຜ່ານມາ, ທີ່ສະພາແຫ່ງຊາດ ກຳມະບານສະພາແຫ່ງຊາດ ໄດ້ມີກອງປະຊຸມສະຫລຸບຕີລາຄາການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2021 ແລະ ພິທີປາຖະກະຖາວັນກຳມະກອນສາກົນ ຄົບຮອບ 136 ປີ (1 ພຶດສະພາ 1886 -1 ພຶດສະພາ 2022) ໂດຍການເປັນປະທານຂອງສະຫາຍ ອຳໄພ ຈິດມານົນ ຄະນະພັກສະພາແຫ່ງຊາດ, ປະທານຄະນະບໍລິຫານງານສະຫະພັນກຳມະບານ ສະພາແຫ່ງຊາດ ເຂົ້າຮ່ວມມີສະຫາຍ ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ; ມີສະຫາຍຜູ້ຕາງໜ້າສູນກາງສະຫະພັນກຳມະບານລາວ; ບັນດາສະຫາຍຮອງປະທານ, ຄະນະກຳມະບານຮາກຖານ ແລະ ສະມາຊິກກຳມະບານທົ່ວສະພາແຫ່ງຊາດເຂົ້າຮ່ວມ.

ໃນກອງປະຊຸມ, ໄດ້ຮັບຟັງການຜ່ານບົດສະຫລຸບການຈັດຕັ້ງປະຕິບັດຂະບວນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2021 ແລະ ວາງທິດທາງແຜນການປີ 2022, ຜ່ານຂໍ້ຕົກລົງມອບໃບຢັ້ງຢືນ 5 ເປັນເຈົ້າ ໃຫ້ແກ່ກຳມະບານຮາກຖານ ພາຍໃນສະພາແຫ່ງຊາດ; ພ້ອມນັ້ນ, ໄດ້ມີພິທີມອບໃບຢັ້ງຢືນ 5 ເປັນເຈົ້າ ໃຫ້ແກ່ກຳມະບານຮາກຖານ ພາຍໃນສະພາແຫ່ງຊາດ ແລະ ຕາງໜ້າບັນດາຮາກຖານທັງ 10 ຮາກຖານກໍໄດ້ຂຶ້ນຈັບມືແຂ່ງຂັນດັ່ງກ່າວ; ຈາກນັ້ນ, ສະຫາຍປະທານຄະນະບໍລິຫານງານສະຫະພັນກຳມະບານ ສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມ ແລະ ປາຖະກະ

ອ່ານຕໍ່ໜ້າ 2

## ຮອງປະທານ ກຕທ ສືບຕໍ່ຕິດຕາມກວດກາ ຂົງເຂດວຽກງານການຕ່າງປະເທດ ຢູ່ແຂວງອັດຕະປື



(ສພຊ) ໃນລະຫວ່າງວັນທີ 19-20 ພຶດສະພາ 2022, ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ (ກຕທ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສືບຕໍ່ເຄື່ອນໄຫວຢ້ຽມຢາມ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດ ຢູ່ແຂວງອັດຕະປື; ຈາກນັ້ນ, ໄດ້ເຂົ້າພົບທ່ານ ທະນູໄຊ ບັນຊາລິດ ຮອງເຈົ້າແຂວງງອັດຕະປື ເພື່ອແຈ້ງຈຸດປະສົງຂອງການເຄື່ອນໄຫວຕິດຕາມກວດກາໃນຄັ້ງນີ້; ພ້ອມນັ້ນ, ທ່ານຮອງເຈົ້າແຂວງ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງແຜນພັດທະນາເສດ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 7


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

## ປະທານ...

ແລະ ທາງເລີກ ພັກ, ລັດ ແລະ ປະຊາຊົນອ້າຍນ້ອງຫວຽດນາມ ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອແກ່ ສປປລາວ ຕະຫລອດມາ ເປັນຕົ້ນແມ່ນ ໄດ້ບີແບ່ງທຶນຮອນອັນໃຫຍ່ຫລວງ ໃຫ້ແກ່ການກໍ່ສ້າງຕຶກຫໍສະພາແຫ່ງຊາດລາວຫລັງໃໝ່ ສຳເລັດສົມບູນຕາມຄາດໝາຍ; ການພົວພັນດ້ານການເມືອງ, ປກຊ-ປກສ, ການຕ່າງປະເທດ ສືບຕໍ່ໜັກແໜ້ນ, ການພົວພັນດ້ານເສດຖະກິດ-ການຄ້າ, ການລົງທຶນ, ການພົວພັນແຂວງທ້ອງຖິ່ນຕ່າງໆຂອງສອງປະເທດ ສືບຕໍ່ມີຄວາມຄືບໜ້າ; ພິເສດ, ໃນລະຫວ່າງວັນທີ 15-17 ພຶດສະພາ 2022 ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດຫວຽດນາມ ນຳໂດຍສະຫາຍ ເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະ ກໍໄດ້ມາຢ້ຽມຢາມສັນຖະວະໄມຕີ ສປປ ລາວ ຢ່າງເປັນທາງການ, ສອງຝ່າຍໄດ້ຮ່ວມກັນເຊັນບົດບັນທຶກຄວາມ



ເຂົ້າໃຈວ່າດ້ວຍການຮ່ວມມື (MOU) ລະຫວ່າງ ສອງສະພາແຫ່ງຊາດ ລາວ-ຫວຽດນາມ ສະບັບໃໝ່ ແລະ ເປັນສັກຂີພິຍານໃນການລົງນາມບົດບັນທຶກ ວ່າດ້ວຍການຮ່ວມມືລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ສະບັບໃໝ່ ພ້ອມທັງແຈ້ງໃຫ້ຊາບກ່ຽວກັບຜົນຂອງກອງປະຊຸມອົງຄະນະພັກສະພາແຫ່ງຊາດ ໄດ້ຈັດກອງປະຊຸມໃຫຍ່ຄັ້ງທີ IV ໃນວັນທີ 21 ມັງກອນ 2022 ແລະ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດລາວໂດຍຫຍໍ້.

ສະຫາຍ ນາງ ເຈື່ອງ ທິ ມາຍ ກໍໄດ້ກ່າວສະແດງຄວາມຂອບໃຈທີ່ສະຫາຍ ໄຊສົມພອນ ພົມວິຫານ ໄດ້ເສຍສະຫລະເວລາອັນມີຄຸນຄ່າໃຫ້ການຕ້ອນຮັບດ້ວຍຄວາມອົບອຸ່ນ ພ້ອມທັງລາຍງານໃຫ້ຮູ້ກ່ຽວກັບຜົນຂອງການພົບປະເຮັດວຽກຮ່ວມກັບຄະນະຈັດຕັ້ງສູນກາງພັກປະຊາຊົນປະຕິວັດລາວ ແລະ ຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບ ໃນຄັ້ງນີ້.

ພິເສດ, ໃນປີ 2022 ເປັນປີສາມັກຄີມິດຕະພາບລາວ-ຫວຽນາມ, ສອງສະພາແຫ່ງຊາດຂອງສອງປະເທດກໍໄດ້ຈັດກິດຈະກຳຫລາຍຢ່າງ ເພື່ອສະເຫລີມສະຫລອງປີສາມັກຄີ ກໍຄື ສອງວັນປະຫວັດສາດແຫ່ງການພົວພັນລະຫວ່າງສອງປະເທດ ຄືວັນສ້າງຕັ້ງສາຍພົວພັນທາງການທູດ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມມີຊີວິດຊີວາ ແຫ່ງສາຍພົວພັນພິເສດ ລາວ-ຫວຽດນາມ.

(ສອນສັກ ວັນວິໄຊ)



## ກຳມະບານ...

ຖາວັນກຳມະກອນສາກົນ ຄົບຮອບ 136 ປີ (1 ພຶດສະພາ 1886 -1 ພຶດສະພາ 2022).

ສະຫາຍ ປອ. ລົມຄຳ ດວງສະຫວັນ ໄດ້ມີຄຳເຫັນໂອ້ລົມວ່າ: ຜ່ານການຮັບຟັງບົດລາຍງານດັ່ງກ່າວເຫັນວ່າແຕ່ລະຮາກຖານກຳມະບານມີຜົນງານພົ້ນເດັ່ນຫລາຍດ້ານ, ສິ່ງທີ່ຢັ້ງຢືນໄດ້ແມ່ນມີເຖິງ 8 ກຳມະບານຮາກຖານພາຍໃນສະພາແຫ່ງຊາດ ໄດ້ຖືກຮັບຮອງເປັນຮາກຖານກຳມະບານ 5 ເປັນເຈົ້າ ປະຈຳປີ 2021; ນອກຈາກນັ້ນ, ຍັງເຫັນວ່າສະມາຊິກກຳມະບານ ຢູ່ແຕ່ລະຮາກຖານ ໄດ້ຕັ້ງໜ້າປະກອບສ່ວນ ແລະ ເຂົ້າຮ່ວມຢ່າງຫ້າວຫັນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະ ໃນນາມເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ຕາມ 3 ພາລະບົດບາດຕົ້ນຕໍຄື: ດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ດ້ານການຕິດຕາມກວດກາ ເຊິ່ງເຮັດໃຫ້ສະມາຊິກກຳມະບານຫລາຍສະຫາຍ ໄດ້ຮັບໃບຍ້ອງຍໍຄະນະປະຈຳສະພາແຫ່ງຊາດ ແລະ ໃບຍ້ອງຍໍຄະນະເລຂາທິການສະພາແຫ່ງຊາດ ໃນຊຸມປີຜ່ານມາ. ພ້ອມນີ້, ສະຫາຍຍັງໄດ້ມີບາງທັດສະນະຄຳເຫັນວ່າ: ໃຫ້ສືບຕໍ່ຕັ້ງໜ້າສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກກຳມະບານ ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊົນຊັ້ນກຳມະກອນ ກໍຄືຊາວຜູ້ອອກແຮງງານ; ເພີ່ມທະວີຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ ຂອງສະມາຊິກກຳມະບານ ຕາມກົດໝາຍວ່າດ້ວຍກຳມະບານລາວ ກຳນົດໄວ້; ຕັ້ງໜ້າຊຸກຍູ້ ແລະ ສູ້ຊົນຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າ ໃຫ້ສະຫະພັນກຳມະບານສະພາແຫ່ງຊາດ ໄດ້ຮັບການຢັ້ງຢືນຈາກສູນກາງສະຫະພັນກຳມະບານລາວ ໃນປີ 2022 ໂດຍການເສີມຂະຫຍາຍດ້ານດີຜົນງານ ແລະ ແກ້ໄຂບາງຂໍ້ຄົງຄ້າງຕ່າງໆ ຢູ່ແຕ່ລະຮາກຖານກຳມະບານສະພາແຫ່ງຊາດ ໃຫ້ດີຂຶ້ນ, ການສ້າງຂະບວນການຕ້ອງໃຫ້ມີຄວາມຟົດຟື້ນຕິດພັນກັບຂະບວນການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ຕ້ອງສ້າງໃຫ້ສະມາຊິກກຳມະບານມີການແຂ່ງຂັນກັນເຝິກຝົນຫລໍ່ຫລອມຕົນເອງ, ແຂ່ງຂັນກັນປະຕິບັດລະບຽບວິໄນ, ກົດໝາຍ, ແຂ່ງຂັນກັນປະຕິບັດວຽກງານໃຫ້ດີ, ໃຫ້ໄວ ແລະ ມີປະສິດທິຜົນສູງ, ມີຫົວຄິດປະດິດສ້າງ ແລະ ພັດທະນາຕົນເອງ, ກົມກອງ, ໜ່ວຍງານທີ່ຕົນສັງກັດ; ການສ້າງຂະບວນການແມ່ນຈຸດປະສົງເພື່ອປຸກລະດົມກົມກອງ, ບຸກຄົນ ໃຫ້ມີຄວາມຫ້າວຫັນ, ຊອກໄດ້ຜູ້ດີເດັ່ນ, ສ້າງໃຫ້ມີຄົນດີ, ຄົນເກັ່ງ ແລະ ກ້າວໜ້າ, ຕີຖອຍປາກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນຄວາມຂີ້ຄ້ານມັກງ່າຍ ເຮັດວຽກພໍແລ້ວ ລໍຖ້າແຕ່ການຊີ້ນຳ ຫລື ຄຳສັ່ງຈາກຂັ້ນເທິງ, ຂາດຄວາມຮັບຜິດຊອບ ແລະ ອື່ນໆ ແລະ ສຳລັບຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ກໍຄືຄະນະກຳມະບານຮາກຖານ ໃຫ້ສືບຕໍ່ຊີ້ນຳ-ນຳພາ ວຽກງານຂອງກຳມະບານ ຕາມພາລະບົດບາດຂອງຕົນ ໂດຍການປັບປຸງລະບອບແບບແຜນວິທີເຮັດວຽກໃຫ້ສອດຄ່ອງ ແລະ ມີປະສິດທິຜາບໃນແຕ່ລະໄລຍະ. ດ້ານດີ ກໍຄວນເສີມຂະຫຍາຍ, ດ້ານຂໍ້ຄົງຄ້າງ ກໍນຳມາສຶກສາເປັນບົດຮຽນຫາວິທີແກ້ໄຂ ເພື່ອປັບປຸງຄຸນນະພາບການຊີ້ນຳ-ນຳພາ ແລະ ບັນຫາສຳຄັນ ຕ້ອງໃຫ້ມີຄວາມສາມັກຄີພາຍໃນຢ່າງໜັກແໜ້ນ, ປະຕິບັດແບບແຜນວິທີເຮັດວຽກ ຕາມຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ມີລະບອບປະຊຸມຕາມລະບຽບການກຳນົດ ແລະ ເພີ່ມທະວີການປະສານສົມທົບແໜ້ນກັບອົງການຈັດຕັ້ງມະຫາຊົນທີ່ເປັນພາຄີ (ສະຫະພັນແມ່ຍິງ ແລະ ອົງການຈັດຕັ້ງຊາວໜຸ່ມ) ເພື່ອພ້ອມກັນເຮັດສຳເລັດໜ້າທີ່ການເມືອງຂອງຕົນ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານ ຂອງຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ວາງອອກ ໃນແຕ່ລະໄລຍະ ໃຫ້ສາມາດບັນລຸຕາມຄາດໝາຍທີ່ວາງໄວ້.

(ນາງ ສຸພາວັນ ທອມສະນິດ)

## ເລື່ອງເດັ່ນ, ຂ່າວເດັດ

# ຄັດໂດຍ: ທອມສະນິດ

❑ *ເພື່ອເປັນການຜັນຂະຫຍາຍບຸກທະລຸປະຕິບັດນະໂຍບາຍປະຢັດ ເພື່ອມີທຶນຮອນເຂົ້າໃສ່ການພັດທະນາ ແລະ ແກ້ໄຂຄວາມທຸກຍາກທັງເປັນການຄຸ້ມຄອງຊັບສິນຂອງລັດເຂົ້າສູ່ລະບຽບການ, ພາຍຫລັງທີ່ໄດ້ສຳເລັດກອງປະຊຸມລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໃນວັນທີ 17 ພຶດສະພາຜ່ານມາ, ສາມາດຈັດຕັ້ງປະຕິບັດໄດ້ບັນດາໜ້າວຽກຄື: ໄດ້ດຳເນີນການຖອນລົດປະຈຳຕຳແໜ່ງຈຳນວນ 10 ຄັນ ຈາກການນຳລະດັບສູງ, ພ້ອມທັງໄດ້ຈັດສັນ, ສັບຊ້ອນ, ດຸ່ນດ່ຽງ ລົດທີ່ໄດ້ຖອນມາແລ້ວ ແລະ ທີ່ມີຢູ່ໃຫ້ບັນດາກະຊວງ ແລະ ອົງການຈັດຕັ້ງພັກ-ລັດ ທີ່ຍັງຂາດເຂີນ 17 ຄັນ ແລະ ກະຊວງການເງິນໄດ້ສຳເລັດໂດຍພື້ນຖານ ການອອກແບບສະຕິກເກີລົດຮັບໃຊ້ບໍລິຫານລວມ ແລະ ລົດຮັບໃຊ້ວຽກງານວິຊາສະເພາະ ເພື່ອຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.*

***ນສພ. ປະເທດລາວ 01/06/2022***

❑ *ປັດຈຸບັນ, ທົ່ວປະເທດ ມີຜູ້ຕິດເຊື້ອໄຂ້ຍຸງລາຍສະສົມແຕ່ວັນທີ 01 ມັງກອນ 2022 ເຖິງວັນທີ 29 ພຶດສະພາ 2022 ມີທັງໝົດ 996 ກໍລະນີ ເຊິ່ງໃນນີ້ ຫລາຍກວ່າໝູ່ແມ່ນນະຄອນຫລວງວຽງຈັນ 456 ກໍລະນີ, ສາລະວັນ 226 ກໍລະນີ (ເສຍຊີວິດ 1 ກໍລະນີ), ສະຫວັນນະເຂດ 50 ກໍລະນີ ແລະ ຈຳປາສັກ 44 ກໍລະນີ.*

***ນສພ. ປະເທດລາວ 02/06/2022***

❑ *ໄລຍະ 4 ເດືອນຕົ້ນປີ 2022 ເຖິງວ່າຕົວເລກມູນຄ່າດຸນການຄ້າດ້ານສິນຄ້າຂອງ ສປປລາວ ໄດ້ເກີນດຸນຢູ່ໃນລະດັບ 589,66 ລ້ານໂດລາ ດີກວ່າໄລຍະດຽວກັນຂອງປີຜ່ານມາເກືອບ 50% ແຕ່ໃນນີ້ມີພຽງແຕ່ 33% ຂອງມູນຄ່າການສົ່ງອອກເທົ່ານັ້ນ ທີ່ໄດ້ໂອນເຂົ້າມາປະເທດຜ່ານລະບົບທະນາຄານ, ໃນຂະນະທີ່ 98% ຂອງມູນຄ່າການນຳເຂົ້ານັ້ນ ໄດ້ມີການໂອນອອກຜ່ານລະບົບທະນາຄານ ເຮັດໃຫ້ພວກເຮົາໄດ້ຜະເຊີນກັບສະພາບການມີກະແສເງິນອອກປະເທດ ຜ່ານລະບົບທະນາຄານຫລາຍກວ່າມີກະແສເງິນເຂົ້າປະເທດ ຜ່ານລະບົບທະນາຄານໃນລະດັບທີ່ຫລາຍກວ່າໄລຍະດຽວກັນຂອງປີຜ່ານມາ ເຖິງ 143% ເຊິ່ງສະພາບດັ່ງກ່າວໄດ້ສົ່ງຜົນກະທົບເຮັດໃຫ້ທະນາຄານທຸລະກິດສາມາດເກັບຊື້ເງິນຕາຕ່າງປະເທດ ໄດ້ໜ້ອຍກວ່າລະດັບທີ່ຄວນຈະເປັນ ຫລື ໜ້ອຍກວ່າມູນຄ່າການສົ່ງອອກມູນຄ່າການລົງທຶນຈາກຕ່າງປະເທດຫລາຍ, ແຕ່ຄວາມຮຽກຮ້ອງຕ້ອງການເງິນຕາຕ່າງປະເທດຂອງທົ່ວສັງຄົມ ເພື່ອການຊຳລະສະສາງກັບຕ່າງປະເທດ ຍັງສືບຕໍ່ຢູ່ໃນລະດັບສູງ ແລະ ເພີ່ມຂຶ້ນຕໍ່ເນື່ອງ.*

***ນສພ. ປະເທດລາວ 02/06/2022***

## ຖະແຫລ່ງ...

ດາກະຊວງ, ອົງການລັດທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນ ທີ່ຈະນຳສະເໜີຕໍ່ກອງປະຊຸມໃນຄັ້ງນີ້. ມາເຖິງປັດຈຸບັນເຫັນວ່າການກະກຽມແມ່ນຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ.

ຂ້າພະເຈົ້າ, ໃນນາມເລຂາທິການສະພາແຫ່ງຊາດ, ຫົວໜ້າກອງເລຂາກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ຂໍຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄວາມຍິນດີ ແລະ ຖືເປັນກຽດ ແຈ້ງມາຍັງບັນດາທ່ານ ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຮັບຊາບກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

- ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນຈັນ, ວັນທີ 13 ມິຖຸນາ 2022 ແລະ ຈະດຳເນີນໄປເຖິງວັນສຸກ, ວັນທີ 8 ກໍລະກົດ 2022 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ (ທາດຫລວງ), ນະຄອນຫລວງວຽງຈັນ ເຊິ່ງຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 20 ວັນ (ບໍ່ລວມເອົາວັນພັກທາງລັດຖະການ).

- ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. <u>ວຽກງານຂອງລັດຖະບານ</u>

(1) ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

(2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

(3) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

(4) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

(5) ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

(6) ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ;

(7) ບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ;

(8) ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ;

(9) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19;

(10) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ.

2. <u>ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 09 ສະບັບ ໃນນີ້:</u>

2.1 ຮ່າງກົດໝາຍສ້າງໃໝ່ 3 ສະບັບ ຄື:

(1) ຮ່າງກົດໝາຍວ່າດ້ວຍວິຈິດສິນ;

(2) ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ;

(3) ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດແລະວັດຖຸລະເບີດ.

2.2 ກົດໝາຍປັບປຸງ 6 ສະບັບ ຄື:

(1) ກົດໝາຍວ່າດ້ວຍຊັບສິນຂອງລັດ;

(2) ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

(3) ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ;

(4) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ;

(5) ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;

(6) ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.

3. <u>ວຽກງານອົງການໄອຍະການປະຊາຊົນສູງສຸດ ມີຈຳນວນ 1 ບົດ</u>

ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

4. <u>ວຽກງານສະພາແຫ່ງຊາດ ມີຈຳນວນ 2 ບົດ</u>

1) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX;

2) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ.

5. <u>ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ມີຈຳນວນ 8 ບົດ</u>

1) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

3) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ;

4) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດ ໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ;

5) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ;

6) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19;

7) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ;

8) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

6. <u>ມະຕິກອງປະຊຸມສະພາແຫ່ງຊາດ ລວມມີ 17 ສະບັບ.</u>

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

3) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ;

4) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ;

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19;

6) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ;

7) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX;

8) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ;

9) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 09 ສະບັບ (ຈຳນວນ 09 ມະຕິ).

ອີກເທື່ອໜຶ່ງ, ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າຂໍເຊີນຊວນບັນດາທ່ານພະນັກງານ, ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້, ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ: ບັນດາທ່ານສາມາດສົ່ງຄຳຄິດຄຳເຫັນ ແລະ ຄຳສະເໜີໄປຍັງກອງປະຊຸມໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX.
- ອີເມວ: nalao.156@gmail.com

## ຮອງປະທານ...

ຖະກິດ-ສັງຄົມຂອງແຂວງ ເປັນຕົ້ນ ການຈັດຕັ້ງ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ແຂວງ, ການຄຸ້ມຄອງດ່ານສາກົນ ແລະ ອື່ນໆ.

ຈາກນັ້ນ, ທ່ານ ນາງ ວັນດີ ບຸດທະສະວົງ ພ້ອມດ້ວຍຄະນະ ໄດ້ເຮັດວຽກຮ່ວມກັບສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍມີທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ທັງເປັນປະທານສະພາປະຊາຊົນແຂວງ (ສພຂ); ມີບັນດາທ່ານຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ຄະນະກຳມະການ, ຄະນະເລຂາທິການ, ຕາງໜ້າຈາກພະແນກການຕ່າງປະເທດ, ພະແນກແຜນການ ແລະ ການລົງທຶນ, ກອງບັນຊາການທະຫານ ແລະ ດ່ານສາກົນພູເກືອ ເຂົ້າຮ່ວມ; ກອງປະຊຸມໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນສະພາບການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຊ່ວຍເຫລືອລ້າ (ODA) ການລົງທຶນຂອງຕ່າງປະເທດ ໂດຍສະເພາະໂຄງການລົງທຶນ ແລະ ຊ່ວຍເຫລືອລ້າຂອງ ສປ ຈີນ, ສສ.ຫວຽດນາມ, ການຄຸ້ມຄອງການເຄື່ອນໄຫວຂອງອົງການທີ່ບໍ່ຂຶ້ນກັບລັດຖະບານ (INGOs), ອົງການຈັດຕັ້ງທາງສັງຄົມຂອງຕ່າງປະເທດ (CSO), ສະພາບການຄຸ້ມຄອງດ່ານສາກົນ (ການຂົນສົ່ງສິນຄ້າຜ່ານແດນ), ບັນຫາການຄຸ້ມຄອງຄົນຕ່າງປະເທດເຂົ້າ-ອອກເມືອງແບບຜິດກົດໝາຍ, ການຄຸ້ມຄອງຄົນຕ່າງດ້າວ ແລະ ແຮງງານຕ່າງປະເທດ ແລະ ການແຕ່ງງານກັບຄົນຕ່າງປະເທດທີ່ຜິດກົດໝາຍ, ການຄຸ້ມຄອງຫລັກໝາຍຊາຍແດນແຫ່ງຊາດ, ສະກັດກັ້ນ ແລະ ແກ້ໄຂບັນຫາການຄ້າຂາຍຢາເສບຕິດ ແລະ ການຄ້າຂາຍເຖື່ອນຕາມບໍລິເວນຊາຍແດນ, ການຄ້າມະນຸດ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ; ຈາກນັ້ນ, ໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ແລະ ເລິກເຊິ່ງ.

ໃນໂອກາດເຄື່ອນໄຫວຄັ້ງນີ້, ທ່ານຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວຢ້ຽມຢາມເຂື່ອນໄຟຟ້າເຊຂະໝານ 1 ໂດຍການຕ້ອນຮັບຂອງທ່ານ ຟາມຮົ່ງວຽດ ຜູ້ອຳນວຍການບໍລິສັດໄຟຟ້າເຊຂະໝານ 1 ຈຳກັດ; ຈາກນັ້ນ, ໄດ້ຮັບຟັງການລາຍງານສະພາບການປະຕິບັດໂຄງການເຂື່ອນໄຟຟ້າເຊຂະໝາຍ 1 ວ່າ: ໂຄງການເຂື່ອນໄຟຟ້າເຊຂະໝານ 1 ໄດ້ລົງທຶນການກໍ່ສ້າງບົນພື້ນຖານການຮ່ວມມືດ້ານພະລັງງານ ລະຫວ່າງລັດຖະບານຫວຽດນາມ ແລະ ລາວ ມີກຳລັງຕິດຕັ້ງ 322 MW, ໄດ້ເປີດວາງສີລາລຶກໂຄງການຄັ້ງວັນທີ 6 ມີນາ 2011 ລວມມູນຄ່າການລົງທຶນ 539,49 USD ປະກອບມີ: ເຮືອນຈັກເຂື່ອນເຊຂະໝານ 1 ກຳລັງຕິດຕັ້ງ 290 MW ມີ 2 ໜ່ວຍຈັກ, ເຮືອນຈັກ (ຕອນລຸ່ມ) ກຳລັງຕິດຕັ້ງ 32 MW ມີ 2 ໜ່ວຍຈັກ, ແລວສາຍສົ່ງໄຟຟ້າ 230 KV ຈາກເຮືອນຈັກເຂື່ອນໄຟຟ້າເຊຂະໝານ 1 ໄປຫາຊາຍແດນລາວ-ຫວຽດນາມມີລວງຍາວ 70,1 ກມ, ໄດ້ຈັດສັນເຂດບ້ານໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ, ເຂດຈັດສັນບ້ານສຸກສະຫວ່າງຫາດັກບູ ມີ 158 ຄອບຄົວ ແລະ ເຂດຈັດສັນຫ້ວຍດຸມມີ 98 ຄອບຄົວ.

(ວິນັດ ສີສຸລາດ)

# ເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ ສສຂ ແລະ ພະນັກງານຊ່ວຍວຽກ ສສຂ 6 ເມືອງ



(ສພຊ) ເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານຊ່ວຍວຽກ ສສຂ ມີຄວາມຮູ້ຄວາມສາມາດ ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໂດຍສະເພາະແມ່ນການປະຕິບັດພາລະບົດບາດພິຈາລະນາ ແລະ ຮັບຮອງເອົານິຕິກໍາທີ່ສໍາຄັນຂອງແຂວງ, ຕົກລົງບັນຫາສໍາຄັນພື້ນຖານຂອງແຂວງ ແລະ ຕິດຕາມກວດກາການເຄົາລົບປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນແຂວງ. ໃນລະຫວ່າງວັນທີ 18-20 ພຶດສະພາ 2022 ຄະນະປະຈໍາສະພາປະຊາຊົນແຂວງ (ສພຂ) ເຫັນດີໃຫ້ຄະນະຮັບຜິດຊອບຈັດກອງປະຊຸມເຝິກອົບຮົມ ໃນຫົວຂໍ້ "ສ້າງຄວາມເຂັ້ມແຂງດ້ານວຽກງານຕິດຕາມກວດກາແຜນງົບປະມານ ແລະ ຄຸ້ມຄອງໂຄງການລົງທຶນຂອງລັດ", ໂດຍການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງ, ມີການນໍາຂັ້ນແຂວງ, ສສຂ ປະຈໍາເມືອງ, ພະນັກງານຊ່ວຍວຽກປະຈໍາເຂດເລືອກຕັ້ງ 6 ເມືອງຄື: ເມືອງນໍ້າບາກ, ເມືອງໂພນທອງ, ເມືອງວຽງຄໍາ, ເມືອງງອຍ, ເມືອງປາກອູ ແລະ ນະຄອນ-ຫລວງພະບາງ ເຂົ້າຮ່ວມທັງໝົດ 75 ທ່ານ, ຍິງ 15 ທ່ານ.

ກອງປະຊຸມໃນຄັ້ງນີ້, ຈັດຂຶ້ນເພື່ອເປັນການສ້າງຄວາມເຂັ້ມແຂງ ໃຫ້ ສສຂ ທີ່ປະຈໍາແຂວງ, ສສຂ ປະຈໍາເຂດເລືອກຕັ້ງເມືອງ ແລະ ພະນັກງານຊ່ວຍວຽກ ເຊິ່ງຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ໃນຫົວຂໍ້ດັ່ງນີ້: 1) ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ; 2) ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງໂຄງການລົງທຶນຂອງລັດ; 3) ການສ້າງແຜນງົບປະມານ ແລະ ການເກັບລາຍຮັບ-ການຄຸ້ມຄອງລາຍຈ່າຍ; 4) ຂັ້ນຕອນ ແລະ ວິທີການຄົ້ນຄວ້າຄໍາຮ້ອງທຸກຂອງສະມາຊິກສະພາປະຊາຊົນແຂວງປະຈໍາເມືອງ; 5) ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານ; 6) ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ. ພ້ອມນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ມີການສົນທະນາແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນຕື່ມອີກ.

ຈາກນັ້ນ, ປະທານກອງປະຊຸມຍັງໄດ້ແນະນໍາກ່ຽວກັບການກະກຽມບົດສະຫລຸບການຈັດຕັ້ງປະຕິບັດ ປະຈໍາ 6 ເດືອນ ແລະ 1 ປີ ຂອງສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ, ເພື່ອຄວາມເປັນເອກະພາບໃນການສະຫລຸບລາຍງານໃຫ້ສະພາປະຊາຊົນແຂວງເປັນແຕ່ລະໄລຍະ.

(ນາງ ຄໍາຫຼ້າ ພອນພິລາ)

# ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ ອຸດົມໄຊ ເຊັນບົດບັນທຶກຮ່ວມມືກັບ 3 ພະແນກການ

(ສພຊ) ວັນທີ 24 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ໄດ້ມີພິທີເຊັນບົດບັນທຶກຮ່ວມວ່າດ້ວຍການພົວພັນລະຫວ່າງຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ ກັບ 3 ພະແນກການຄື: ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ໂດຍການເປັນປະທານຂອງທ່ານ ຄໍາເພີຍ ງອນວັນຄໍາ ຮອງປະທານ ສພຂ, ມີທ່ານ ທອງໄຊ ທໍ່ຈິງເລ່ຍຈີ ປະທານຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ, ທ່ານ ຄໍາພອນ ມູນລະໄມ ຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ແຂວງ, ທ່ານ ສອນທະນູ ສິງດາລາ ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ຜູ້ຕາງໜ້າຈາກພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ບັນດາຄະນະປະຈໍາ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງກ່ຽວຂ້ອງເຂົ້າຮ່ວມ.



ຈຸດປະສົງຂອງການເຊັນບົດບັນທຶກຮ່ວມຄັ້ງນີ້, ແມ່ນເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ຂໍ້ຕົກລົງຮ່ວມວ່າດ້ວຍການພົວພັນລະຫວ່າງ ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງເປັນຕົ້ນ: ການສ້າງ ແລະ ປັບປຸງນິຕິກໍາ, ການຄົ້ນຄວ້າບັນຫາສໍາຄັນຂອງທ້ອງຖິ່ນ, ການຄົ້ນຄວ້າປຶກສາຫາລືກ່ຽວກັບການແກ້ໄຂຄໍາຮ້ອງທຸກ, ການເຂົ້າຮ່ວມຕິດຕາມກວດກາ ແລະ ເຂົ້າຮ່ວມຊີ້ແຈງ, ລາຍງານຕໍ່ກອງປະຊຸມ ສພຂ ຂອງຂົງເຂດເສດຖະກິດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບົດບັນທຶກຮ່ວມດັ່ງກ່າວປະກອບມີ 3 ໝວດ, 6 ມາດຕາ, ໄດ້ກໍານົດຫລັກການ, ເນື້ອໃນ ແລະ ວິທີການປະສານງານລະຫວ່າງ ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ ກັບ 3 ພະແນກການ ເພື່ອຮັບປະກັນໃນການຄົ້ນຄວ້າປຶກສາຫາລື, ແລກປ່ຽນຂໍ້ມູນ, ສະໜອງຂໍ້ມູນ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃຫ້ສອດຄ່ອງກັບແນວທາງຂອງພັກ ແລະ ກົດໝາຍຂອງລັດ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານຕ່າງໆ ໃຫ້ເຂັ້ມແຂງ, ໂປ່ງໃສ, ມີປະສິດທິຜົນສູງເພື່ອຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມພາຍໃນແຂວງ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ຜູ້ເຂົ້າຮ່ວມພິທີໄດ້ປະກອບຄໍາຄິດຄໍາເຫັນໃສ່ບົດບັນທຶກຮ່ວມເພີ່ມເຕີ່ມບາງບັນຫາ ແລະ ຫລັງຈາກນັ້ນໄດ້ລົງລາຍເຊັນຮ່ວມກັນຢ່າງເປັນທາງການ.

ໃນພິທີດັ່ງກ່າວ, ທ່ານ ຄໍາເພີຍ ງອນວັນຄໍາ ໄດ້ມີຄໍາເຫັນໂອ້ລົມ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ເອົາໃຈໃສ່ໃນການປະສານງານວຽກງານຕ່າງໆໃຫ້ກົມກຽວກັນ, ວາງແຜນການເຄື່ອນໄຫວຮ່ວມກັນ, ຄົ້ນຄວ້າແກ້ໄຂບັນຫາທີ່ມີຄວາມຫຍຸ້ງຍາກ ເພື່ອເຮັດໃຫ້ໜ້າທີ່ວຽກງານຂອງແຕ່ລະຝ່າຍນັບມືນັບດີຂຶ້ນກວ່າເກົ່າ ແລະ ຫວັງຢ່າງຍິ່ງວ່າ ໃນຕໍ່ໜ້າພວກເຮົາຈະໄດ້ຮ່ວມມືກັນ, ພ້ອມກັນຈັດຕັ້ງປະບັດໜ້າວຽກຕາມພາລະບົດບາດຂອງຕົນ.

(ແສງພອນ ອິນນະລົງ)

# ຫາລືວຽກງານປັບປຸງກົງຈັກການຈັດຕັ້ງ ສສຂ ປະຈໍາເຂດເລືອກຕັ້ງເມືອງໄຊຍະບູລີ



(ສພຊ) ໃນວັນທີ 24 ພຶດສະພາ 2022 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງໄຊຍະບູລີ, ແຂວງໄຍຊະບູລີ ໄດ້ມີກອງປະຊຸມປຶກສາຫາລືວຽກງານປັບປຸງກົງຈັກການຈັດຕັ້ງສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈໍາເຂດເລືອກຕັ້ງເມືອງໄຊຍະບູລີ, ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄໍາພັນເພັງ ປະທານສະພາປະຊາຊົນແຂວງ (ສພຂ) ແລະ ທ່ານ ບຸນແທນ ທີແກ້ວ ເຈົ້າເມືອງໆໄຊຍະບູລີ, ມີບັນດາຮອງປະທານ ສພຂ, ສສຂ, ຄະນະເລຂາທິການ ສພຂ, ຄະນະປະຈໍາພັກເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງ, ຄະນະຈັດຕັ້ງແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານມະຕິຂອງຄະນະປະຈໍາສະພາປະຊາຊົນແຂວງ ວ່າດ້ວຍການສ້າງຕັ້ງກົງຈັກຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ ຈາກທ່ານນາງ ວັນນາ ພົມວິສອນ ເລຂາທິການ ສພຂ. ຈາກນັ້ນ, ກອງປະຊຸມກໍໄດ້ຄົ້ນຄວ້າແລກປ່ຽນຄໍາຄິດ-ຄໍາເຫັນຈາກຜູ້ເຂົ້າຮ່ວມກອງປະຊຸມຢ່າງກົງໄປກົງມາ ເພື່ອເຮັດໃຫ້ການປັບປຸງກົງຈັກສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ເວົ້າລວມເວົ້າສະເພາະກໍເພື່ອກໍານົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ, ຫລັກການ ແລະ ແບບແຜນວິທີເຮັດວຽກຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ໃນການເປັນເສນາທິການ ໃຫ້ຄະນະປະຈໍາສະພາປະຊາຊົນແຂວງ ໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນ.

(ອິນທີ ຂຽວສີຟ້າ)

# ສະມາຊິກພັກ, ພະນັກງານພາຍໃນ ສພຂ ຜົ້ງສາລີ ຟັງປາຖະກະຖາວັນສໍາຄັນ



(ສພຊ) ໃນວັນທີ 23 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ມີພິທີປາຖະກະຖາເລົ່າມູນເຊື້ອ 7 ເອກະສານສໍາຂອງພັກ, ຂອງຊາດ ແລະ ຂອງປະເທດເພື່ອນມິດສາກົນ ໂດຍການເປັນປະທານຂອງສະຫາຍນາງ ພອນສະຫວັນ ສັກຕິຄຸນ ເລຂາໜ່ວຍພັກສະພາປະຊາຊົນແຂວງ; ມີບັນດາສະມາຊິກພັກສົມບຸນ, ສໍາຮອງ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.

ໃນການຈັດຕັ້ງໂຄສະນາປາຖະກະຖາເລົ່າມູນເຊື້ອ ໄດ້ຮັບຟັງ ສະຫາຍ ພັທ ຄໍາດາ ໂສລະພົມ ຮອງເລຂາໜ່ວຍພັກ ສພຂ ໄດ້ເລົ່າຄືນມູນເຊື້ອວັນຜ່າວົງປິດລ້ອມກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນຊຽງຂວາງ ຄົບຮອບ 63 ປີ (18/5/1959-18/5/2022); ວັນວິລະກໍາໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນໍາຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 62 ປີ (24/5/1960-24/5/2022); ວັນກໍາມະກອນສາກົນ ຄອບຮອບ 136 ປີ (1/5/1986-1/5/2022); ຮັບຟັງສະຫາຍ ນາງ ວຽງຄໍາ ວໍລະຈິດ ປະທານກວດກາຄະນະໜ່ວຍພັກເລົ່າຄືນວັນຄ້າຍເກີດຂອງທ່ານ ກາກມາກ ຄົບຮອບ 204 ປີ (5/5/1818-5/5/2022); ວັນໄຊຊະນະຂອງສະຫະພາບໂຊວຽດເໜືອຟາດຊິດເຢຍລະມັນ ໃນສົງຄາມໂລກ ຄັ້ງທີ II ຄົບຮອບ 77 ປີ (9/5/1945-9/5/2022); ຮັບຟັງສະຫາຍ ນາງ ພອນສະຫວັນ ສັກຕິຄຸນ ເລົ່າຄືນມູນເຊື້ອວັນໄຊຊະນະດຽນບຽນຟູ ຄົບຮອບ 68 ປີ (7/5/1954- 7/5/2022); ວັນຄ້າຍວັນເກີດຂອງປະທານໂຮ່ຈິມິນ ຄົບຮອບ 132 ປີ (19/5/1890-19/5/2022).



ການຈັດຕັ້ງໂຄສະນາປາຖະກະຖາ ເລົ່າມູນເຊື້ອໃນຄັ້ງນີ້, ຈັດຂຶ້ນເພື່ອເປັນການທວນຄືນມູນເຊື້ອ ວັນສໍາຄັນຂອງພັກ, ຂອງຊາດ ກໍຄືຂອງປະເທດເພື່ອນມິດສາກົນ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນໄດ້ຮັບຮູ້ ແລະ ເຂົ້າໃຈ ເຖິງປະຫວັດສາດ ແລະ ມູນເຊື້ອດັ່ງກ່າວ, ທັງເປັນການສຶກສາອົບຮົມ ແລະ ນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ເປັນຕົ້ນ: ຄຸນສົມບັດສິນທໍາປະຕິວັດ, ຄວາມຈົ່ງຮັກພັກດີ ແລະ ນໍ້າໃຈເສຍສະຫລະຕໍ່ປະເທດຊາດ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ສພຂ ສາລະວັນ ສືບຕໍ່ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ



(ສພຂ) ໃນລະຫວ່າງວັນທີ 23-24 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ສືບຕໍ່ເຄື່ອນໄຫວຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 6 ເດືອນຕົ້ນປີ ແລະ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ 4 ເມືອງຂອງແຂວງ ໂດຍແບ່ງອອກເປັນ 2 ຄະນະຄື: ເມືອງເລົ່າງາມ, ເມືອງວາປີ ນຳໂດຍທ່ານ ສີເຮັງ ທອນສົມບັດ ປະທານ ສພຂ ພ້ອມດ້ວຍ ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະເລຂາທິການ ສພຂ, ມີຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ; ສ່ວນເມືອງລະຄອນເພັງ, ເມືອງຄົງເຊໂດນ ນຳໂດຍທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານ ສພຂ ພ້ອມດ້ວຍ ສສຂ, ຄະນະເລຂາທິການ ສພຂ, ມີຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ; ໂດຍການຕ້ອນຮັບ ແລະ ເຮັດວຽກຮ່ວມກັບເລຂາພັກເມືອງເຈົ້າເມືອງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ອົງການປົກຄອງເມືອງ.

ການເຄື່ອນໄຫວຄັ້ງນີ້, ບັນດາເຈົ້າເມືອງຂອງແຕ່ລະເມືອງໄດ້ລາຍງານຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງເມືອງ ແລະ ຜົນຂອງການຈັດຕັ້ງຜັນຂະຫຍາຍສອງວາລະແຫ່ງຊາດ ໂດຍຫຍໍ້; ຮັບຟັງການປະກອບຄຳເຫັນບາງບັນຫາທີ່ພົ້ນເດັ່ນທີ່ເກີດຂຶ້ນເປັນຕົ້ນ ບັນຫາການຂາດແຄນນ້ຳມັນເຊື້ອໄຟ, ການຂາຍນ້ຳມັນເຊື້ອໄຟ ທີ່ບໍ່ຖືກຕ້ອງຕາມລະບຽບການ, ການແກ້ໄຂບັນຫາປາກົດການຫຍໍ້ທໍ້ ທີ່ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ; ພ້ອມນັ້ນ ກໍໄດ້ຮັບຟັງການຊີ້ແຈ້ງ, ລາຍງານຈາກຕາງໜ້າຫ້ອງການເມືອງ ແລະ ພະແນກການທີ່ກ່ຽວຂ້ອງຕາມຂົງເຂດຄວາມຮັບຜິດຊອບ.

ໂອກາດດັ່ງກ່າວ, ການນຳສະພາປະຊາຊົນແຂວງ ກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາເມືອງ ທີ່ມີຜົນງານພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ແຕ່ລະເມືອງ ເອົາໃຈໃສ່ບາງບັນຫາດັ່ງນີ້: ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊັ່ນ: ການຈັດເກັບລາຍຮັບເຂົ້າງົບປະມານໃຫ້ບັນລຸ, ຊຸກຍູ້ການປູກຝັງ-ລ້ຽງສັດ, ການຜະລິດສິນຄ້າທີ່ມີໜໍ່ແໜງໃຫ້ເປັນທ່າແຮງຂອງເມືອງ, ສົ່ງເສີມໃຫ້ປະຊາຊົນຜະລິດໃຫ້ຫລາຍເພື່ອທົດແທນການນຳເຂົ້າ, ກຳນົດຈຸດຂາຍທີ່ໝັ້ນຄົງຖາວອນ ເພື່ອຂາຍຜົນຜະລິດຂອງຕົນ, ຄຸ້ມຄອງລາຄາສິນຄ້າໃຫ້ຢູ່ໃນເກນມາດຕະຖານຕາມທ້ອງຕະຫລາດ, ຂະແໜງການທີ່ກ່ຽວຂ້ອງນຳພາ-ຊີ້ນຳໃຫ້ເອົາໃຈໃສ່ການຜະລິດ ໃຫ້ສຳເລັດຕາມແຜນການທີ່ວາງໄວ້ທັງປະລິມານ ແລະ ຄຸນນະພາບທີ່ດີລື່ນເກົ່າ ເພື່ອຄ້ຳປະກັນທາງດ້ານສະບຽງອາຫານໃຫ້ຍືນຍົງ ແລະ ໝັ້ນຄົງ; ສຳລັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ແຕ່ລະພາກສ່ວນຂັ້ນເມືອງຂັ້ນບ້ານສືບຕໍ່ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງດ້ວຍຫລາຍວິທີການທັງປຸກລະດົມຂົນຂວາຍມວນຊົນໃຫ້ຮັບຮູ້ເຂົ້າໃຈຕໍ່ຜົນຮ້າຍ ແລະ ເອົາຕົວອອກຫ່າງຈາກຢາເສບຕິດ; ສຸມໃສ່ວຽກງານສຶກສາອົບຮົມເກັບກຳສະຖິຕິເປົ້າໝາຍເສບ ແລະ ເດັດຂາດຕໍ່ຜູ້ຄ້າຂາຍຢາເສບຕິດ; ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງປຶກສາຫາລືກ່ຽວກັບການແກ້ໄຂບັນຫາຢາເສບຕິດໃຫ້ເປັນປະຈຳ, ປົກກະຕິ ແລະ ຕໍ່ເນື່ອງ ເພື່ອເຮັດການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດໄດ້ຮັບຜົນດີກວ່າໄລຍະຜ່ານມາ.

ນອກຈາກນີ້, ຄະນະໄດ້ລົງຊຸກຍູ້, ຕິດຕາມການຜະລິດເປັນສິນຄ້າ ຂອງປະຊາຊົນ ໂດຍສະເພາະແມ່ນການລ້ຽງໝູ, ການລ້ຽງເປັດ-ໄກ່, ການລ້ຽງປາ ທີ່ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວຫລາຍພໍສົມຄວນ.

ການເຄື່ອນໄຫວຄັ້ງນີ້ ເພື່ອເປັນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສພຂ, ເປັນການເກັບກຳຂໍ້ມູນຮອງຮັບໃຫ້ແກ່ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ໃນການກະກຽມເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ທີ່ຈະເປີດໃນລະຫວ່າງກາງເດືອນມິຖຸນາທີ່ຈະມາເຖິງນີ້.

(ນາງ ຄັດສອນ ຮຸ່ງສະຫວ່າງ)

# ສພຂ ວຽງຈັນ ທາບທາມ ຮ່າງກົດໝາຍ 5 ສະບັບ



(ສພຊ) ໂດຍປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ສະບັບເລກທີ 185/ຄລສ. ລົງວັນທີ 5 ພຶດສະພາ 2022. ໃນວັນທີ 18 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ມີກອງປະຊຸມ ລາຍງານຜົນການທາບທາມຮ່າງກົດໝາຍຈຳນວນ 5 ສະບັບ ທີ່ບັນດາພະແນກການກ່ຽວຂ້ອງ ໄດ້ພ້ອມກັນຈັດຕັ້ງການທາບທາມ ໃນຂົງເຂດທີ່ຕິດພັນກັບວຽກງານຂອງຕົນກ່ອນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງປະກອບມີ: ຮ່າງກົດໝາຍວ່າດ້ວຍສານປະຊາຊົນແຂວງ, ຮ່າງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ). ໂດຍການເປັນປະທານຂອງ ທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະກຳມະການເສດຖະກິດ-ແຜນການ ແລະ ການເງິນ ສພຂ ວຽງຈັນ ເຂົ້າຮ່ວມມີປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ຕາງໜ້າຈາກພະແນກການ, ອົງການ, ກົມກອງ, ທີ່ກ່ຽວຂ້ອງ ຕະຫລອດຮອດຫົວໜ້າຂະແໜງ-ຮອງຂະແໜງ ແລະ ພະນັກງານວິຊາການພາຍໃນ ສພຂ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເປັນການທາບທາມຮ່າງກົດໝາຍຈຳນວນດັ່ງກ່າວ ເພື່ອເປັນບ່ອນອີງ ໃນການລາຍງານຜົນການທາບທາມຄຳຄິດ-ຄຳເຫັນ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໄດ້ຄົ້ນຄ້ວາພິຈາລະນາ ແລະ ສະເໜີຫາພາກສ່ວນກ່ຽວຂ້ອງ ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນແລກປ່ຽນ, ຄຳຄິດຄຳເຫັນໃສ່ຮ່າງກົດໝາຍຈຳນວນ 5 ສະບັບ ໂດຍອີງໃສ່ຄຳແນະນຳຂອງກຳມາທິການກົດໝາຍສະພາແຫ່ງຊາດ ແລະ ເພື່ອເຮັດໃຫ້ເນື້ອໃນຂອງບັນດາກົດໝາຍມີຄວາມຮັດກຸມ, ທຸກບັນຫາມີຄວາມກະຈ່າງແຈ້ງ ພ້ອມທັງເປັນບ່ອນອີງໃຫ້ຂະແໜງການຢູ່ຂັ້ນທ້ອງຖິ່ນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກົດໝາຍກຳນົດໄວ້.

(ນັກຂ່າວ ສພຂ ວຽງຈັນ)




# ສພຂ ໄຊສົມບູນ ທາບທາມຮ່າງກົດໝາຍ 9 ສະບັບ



(ສພຊ) ໃນລະຫວ່າງວັນທີ 23-24 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ ຢູ່ສະໂມສອນເມືອງອະນຸວົງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານ ສພຂ, ມີທ່ານ ພັອ ວິໄຊທໍ່ ເພຍຫລວງຈິ່ງເສີ ຮອງປະທານ ສພຂ ພ້ອມດ້ວຍຄະນະປະຈຳ, ປະທານ-ຮອງປະທານຄະນະກຳມະການກ່ຽວຂ້ອງ, ຕະຫລອດຮອດບັນດາຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ ທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ທ່ານ ແດງ ປະທຸມທອງ ໄດ້ສະເໜີຈຸດປະສົງ ແລະ ກ່າວເປີດກອງປະຊຸມວ່າ: ບັນດາທ່ານແຂກທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງພ້ອມກັນສຸມສະຕິປັນຍາ ແລະ ນຳຄວາມຮູ້ຄວາມສາມາດຂອງຕົນ ທີ່ຜ່ານປະສົບການໃນໄລຍະຜ່ານ ຂອງການຈັດຕັ້ງປະຕິບັດວຽກງານ ແລະ ໄດ້ນຳໃຊ້ກົດໝາຍທີ່ພັກ-ລັດ ວາງອອກ ແລະ ພ້ອມກັນປະກອບຄຳເຫັນໃສ່ຮ່າງກົດໝາຍຈຳນວນ 9 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງ), ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ (ປັບປຸງບາງມາດຕາ), ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ (ສະບັບປັບປຸງ), ກົດໝາຍວ່າດ້ວຍ ການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ), ກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ), ກົດໝາຍວ່າດ້ວຍ ວິຈິດສິນ (ສ້າງໃໝ່), ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່), ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ). ເຊິ່ງກົດໝາຍ 9 ສະບັບດັ່ງກ່າວ, ຈະນຳເຂົ້າພິຈາລະນາ, ຮັບຮອງຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄດ້ຈັດຂຶ້ນໃນໄວໆນີ້.

ໃນກອງປະຊຸມ, ບັນດາຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງໄດ້ຂຶ້ນສະເໜີບັນດາຮ່າງກົດໝາຍດັ່ງກ່າວຕາມຂອບເຂດສິດ ແລະ ໜ້າທີ່ ທີ່ຕົນຮັບຜິດຊອບ. ຈາກນັ້ນ, ບັນດາທ່ານ ສສຊ-ສສຂ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ມີຄຳຖາມເຈາະຈີ້ມ ພ້ອມທັງປະກອບຄຳຄິດ, ຄຳເຫັນແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນຢ່າງກົງໄປກົງມາ ເຊິ່ງໄດ້ປະກອບຄຳເຫັນໃສ່ທັງໝົດ 43 ມາດຕາ ທັງນີ້, ກໍເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍ 9 ສະບັບດັ່ງກ່າວ ຢູ່ ສປປລາວ ເວົ້າລວມ, ເວົ້າສະເພາະຢູ່ພາຍໃນແຂວງໄຊສົມບູນ ມີຄວາມຖືກຕ້ອງ, ເປັນທຳ ແລະ ມີຄວາມສັກສິດ.

(ນາງ ອຳໄພພອນ ແກ້ວວິໄລ)

108 ສາລະ

# ສິ່ງທີ່ບໍ່ຄວນເຮັດໃນຫ້ອງການ

# ໂດຍ: ຜູ້ອື່ນ



**- ຄອບວ່າບໍ່ສະບາຍຕະຫລອດ**

ຫ້າມເປັນຄົນທີ່ຄອບວ່າບໍ່ສະບາຍເລື້ອຍໆ ເພາະຄົນຢູ່ໃນຫ້ອງການ ບໍ່ມີໃຜທີ່ຈະເບິ່ງບໍ່ອອກ ວ່ານັ້ນເປັນເລື່ອງແທ້ ຫລື ຕົວະ, ການທີ່ເຮົາຄອບວ່າບໍ່ສະບາຍຕະຫລອດນັ້ນ ຄົນທີ່ຈະເບື່ອໜ່າຍເຮົາທີ່ສຸດ ກໍຄືເພື່ອນຮ່ວມງານ ເພາະເຂົາຕ້ອງມານັ່ງຮັບຜິດຊອບວຽກແທນເຮົາເລື້ອຍໆ;

**- ມາຊ້າເປັນປະຈຳ ແຖມຍັງຫາຂໍ້ອ້າງມາເວົ້າ**

ລົດຕິດຫລາຍ, ບໍ່ສະບາຍ, ໄປວຽກຄອບຄົວ, ອາຫານເປັນພິດ... ສາລະພັດເຫດຜົນ ທີ່ເຮັດໃຫ້ມາວຽກຊ້າຕະຫລອດຈົນຕ້ອງຫາຂໍ້ອ້າງ; ລອງຄິດເບິ່ງວ່າມັນດີແລ້ວບໍ່ ທີ່ເຮົາຕ້ອງມານັ່ງແກ້ຕົວຕະຫລອດ ຮູ້ສຶກເມື່ອຍບໍ່ ທາງທີ່ດີຄວນເຊົາມາວຽກຊ້າ ແລະ ຊື່ສັດກັບຕົນເອງ, ພະຍາຍາມຕື່ນແຕ່ເຊົ້າໄປເຮັດວຽກໃຫ້ທັນໂມງທັນເວລາ;

**- ແຂງກະດ້າງບໍ່ຍອມຄົນ**

ເຖິງວ່າເຮົາຈະເປັນຄົນທີ່ບອກວ່າເຮົາເປັນຄົນກົງໄປກົງມາ ແຕ່ຫົວໜ້າ ຫລື ເພື່ອນຮ່ວມງານ ອາດຈະແຍກອອກວ່າເຮົາເປັນຄົນຫົວແຂງ ຫລື ເປັນຄົນເວົ້າກົງ; ສະນັ້ນ, ຄວນປັບປ່ຽນນິໄສໃໝ່ ເພາະຖ້າເຮົາຫົວດື້ ບໍ່ຍອມຟັງໃຜ ມັນອາດຈະເຮັດໃຫ້ເຮົາພາດໂອກາດດີໆໄດ້;

**- ເອົາວຽກນອກມາເຮັດໃນຫ້ອງການ**

ເລື່ອງນີ້ເປັນເລື່ອງໃຫຍ່ ເພາະບໍ່ມີໃຜທີ່ຈະຢາກໃຫ້ເອົາເວລາເຮັດວຽກໃນອົງກອນໄປເຮັດວຽກຢ່າງອື່ນ ຖືວ່າຫ້າມເດັດຂາດ ເພາະມັນຈະສົ່ງຜົນທີ່ບໍ່ດີຢ່າງແນ່ນອນໃຫ້ແກ່ຕົນເອງ; ສະນັ້ນ; ວຽກນອກຄວນໃຊ້ເວລານອກໂມງໃນຫ້ອງການຈະເປັນການດີທີ່ສຸດ;

**- ຈັບກຸ່ມເວົ້າຂວັນ**

ເປັນພຶດຕິກຳທີ່ບໍ່ດີ ແລະ ເສຍຄຸນສົມບັດທີ່ສຸດ ລອງຄິດເບິ່ງວ່າຖ້າແຕ່ລະມື້ໃນຫ້ອງການມີແຕ່ຜູ້ມັກເວົ້າຂວັນກັນ ບັນຍາກາດພາຍໃນບ່ອນເຮັດວຽກຈະເປັນແນວໃດ; ສະນັ້ນ, ຢ່າຫລົງເຂົ້າໄປໃນວົງວຽນແບບນັ້ນເດັດຂາດ

**- ເວົ້າເລື່ອງວ່າຈະລາອອກ**

ພຶດຕິກຳແບບນີ້ບໍ່ມີໃຜຮັບໄດ້ແນ່ນອນ ໃຜທີ່ມັກເວົ້າໂອ້ອວດວ່າຕົວເອງມີດີໄປຢູ່ໃສກໍໄດ້ນັ້ນ ຈະເຮັດໃຫ້ຕົນເອງຂາດຄວາມເຊື່ອໝັ້ນ ແລະ ເຮັດໃຫ້ບໍ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈໃນການປະຕິບັດໜ້າທີ່ວຽກງານອີກຕໍ່ໄປ; ດັ່ງນັ້ນ, ໃຫ້ຢຸດຕິພຶດຕິກຳທີ່ເວົ້າວ່າຢາກລາອອກ ແລ້ວຫັນມາຕັ້ງໜ້າຕັ້ງໃຈປະຕິບັດໜ້າທີ່ວຽກງານຂອງຕົນ;

**- ຕໍ່ວ່າ ຫລື ເວົ້າຂວັນຫົວໜ້າ**

ພຶດຕິກຳນີ້ຖືວ່າຮ້າຍແຮງທີ່ສຸດ ເພາະການຕໍ່ວ່າ ຫລື ນິນທາຫົວໜ້າ ຖືວ່າເປັນການບໍ່ໃຫ້ກຽດກັນຢ່າງຮຸນແຮງ ບໍ່ວ່າເຮົາຈະບໍ່ພໍໃຈຫົວໜ້າ ຫລື ບໍ່ມັກໃນຕົວຂອງເຈົ້ານາຍປານໃດກໍຕາມ ທາງທີ່ດີຄວນຫາໂອກາດເວົ້າລົມສ່ວນຕົວ ຕ່າງຝ່າຍຈະໄດ້ຕ່າງຮູ້ເຖິງບັນຫາ ແລະ ຊອກວິທີປັບປຸງແກ້ໄຂ ການເຮັດວຽກກໍຈະດີຂຶ້ນ ແຖມບັນຍາກາດໃນບ່ອນເຮັດວຽກກໍຈະດີຂຶ້ນອີກດ້ວຍ;

**- ບໍ່ເຂົ້າສັງຄົມໃນບ່ອນເຮັດວຽກ**

ຫາກໃນຫ້ອງການ ມີງານສ້າງສັນ ແຕ່ເຮົາມັກທີ່ຈະປະຕິເສດບໍ່ໄປຮ່ວມເລື້ອຍໆ ຖືວ່າເປັນສິ່ງທີ່ບໍ່ດີ ເພາະມັນໝາຍເຖິງວ່າເຮົາປະຕິເສດທີ່ຈະເປັນສັງຄົມດຽວກັນກັບເພື່ອນຮ່ວມງານ; ດັ່ງນັ້ນ, ຄວນຫາໂອກາດທີ່ຈະໄປຮ່ວມກິດຈະກຳ ຫລື ງານສັງສັນ ທີ່ທາງຫ້ອງການຈັດຂຶ້ນ ເພື່ອເປັນການສ້າງຄວາມສາມັກຄີລະຫວ່າງພະນັກງານພາຍໃນຫ້ອງການ;

**- ເວົ້າແຕ່ເລື່ອງສ່ວນຕົວ**

ແນ່ນອນວ່າຖ້າເຮົາພົບກັນມື້ທຳອິດ ແລ້ວເວົ້າລົມແຕ່ເລື່ອງສ່ວນຕົວເຮົາຈະຮູ້ສຶກລຳຄານພຽງໃດ ສະນັ້ນ, ຄວນຟັງຄົນອື່ນ ບໍ່ຄວນເວົ້າແຕ່ເລື່ອງສ່ວນຕົວຂອງເຮົາໃຫ້ເພື່ອນຮ່ວມງານຟັງ ເພາະເຂົາອາດຈະຮູ້ສຶກເບື່ອໜ່າຍ ແລະ ສຸດທ້າຍກໍຈະມີໃຜຢາກເວົ້າຢາກລົມກັບເຮົາ ການເຮັດວຽກຮ່ວມກັນຄວນຮັກສາຄວາມສຳພັນກັບເພື່ອນຮ່ວມງານ ໂດຍການຫລຸດການເວົ້າລົມເລື່ອງສ່ວນຕົວ ແລ້ວລອງຫາປະເດັນທີ່ທຸກຄົນກຳລັງໃຫ້ຄວາມສົນໃຈກັນຢູ່ມາສົນທະນາ ມັນອາດຈະຊ່ວຍໃຫ້ບັນຍາກາດດີຂຶ້ນ ແລະ ເຮົາອາດຈະເປັນທີ່ຮັກໃນບ່ອນເຮັດວຽກນຳອີກ;

**- ຢືມເງິນ**

ເລື່ອງນີ້ເປັນເລື່ອງທີ່ລະອຽດອ່ອນທີ່ສຸດ ແລະ ເຮັດຄວາມສຳພັນຂອງຫລາຍໆຄົນແຕກຫັກມາຫລາຍແລ້ວ ເຖິງວ່າເຮົາຈະສະໜິດສະໜົມກັບເພື່ອນຮ່ວມງານພຽງໃດກໍຕາມ ຢ່າຢືມເງິນກັນເດັດຂາດ ຖ້າຍັງຢາກມີຄວາມສຳພັນທີ່ດີກັບເພື່ອນຮ່ວມງານທຸກຄົນ

ເມື່ອຮູ້ແບບນີ້ແລ້ວ ລອງຄວນສຳຫລວດຕົວເອງເບິ່ງ ຢ່າປ່ອຍໃຫ້ເວລາຜ່ານໄປຈົນບໍ່ສາມາດແກ້ໄຂຫຍັງໄດ້ ເພາະເຮົາໃຊ້ຊີວິດໃນບ່ອນເຮັດວຽກບໍ່ຕ່ຳກວ່າ 8 ຊົ່ວໂມງຕໍ່ມື້ ແລະ ບໍ່ເປັນການດີເລີຍ ທີ່ເຮົາຈະຕ້ອງເປັນບຸກຄົນທີ່ພະນັກງານໃນບ່ອນເຮັດວຽກບໍ່ຢາກເຂົ້າໃກ້ ຖ້າເຮົາປັບປ່ຽນພຶດຕິກຳເຫລົ່ານີ້ໄດ້ ເຊື່ອວ່າຈາກທີ່ເຄີຍເຮັດວຽກໃນບັນຍາກາດທີ່ເຄັ່ງຕຶງອາດຈະກາຍມາເປັນການເຮັດວຽກທີ່ມີບັນຍາກາດດີ ແລະ ໄດ້ປະສິດທິພາບຍິ່ງຂຶ້ນ.

**ຄັດຈາກ: ວາລະສານຂວັນໃຈ**

ສາລາກະວີ

# ດົງຫາຍກາຍຮ້ອນ

# ໂດຍ: ບຸນມີ ແກ້ວວົງສາ

❈ ພະນອມໄພຂາດສິ້ນ
ສຸລິແຜດເຜົາລົນ
ນອນສະແດງຄິງຂວ້ຳ
ອາຍຮ້ອນບີບຮັດເນື້ອ

ເຫິງຖິ່ນມາຖຸພູມ
ໝູ່ຄົນຮົນຮ້ອນ
ພັກຕາບໍ່ພໍຍິບ
ໄຄເຫື່ອຍ້ອຍລັ່ງລົນ ໜ່າຍເດ!

❈ ເຮືອນເຄີຍເນົາຢູ່ຢັ້ງ
ນອນຂວ້ຳຫງາຍສະແດງ
ຄາວກ່ອນຍູງຍາງແຕ້
ນອນນັ່ງຫົວຢ່າວຍຸ້ມ

ປາງກ່ອນເຢັນສະບາຍ
ຢູ່ສະບາຍຫາຍຮ້ອນ
ຄອມແຄຂຽວສະອຸ່ມ
ສະບາຍເນື້ອຊື່ນໃຈ

❈ ເວລານານນັບໄດ້
ແດດເຜົາຜານເມືອງຄົນ
ຍ້ອນປ່າໝອງເມີນໜ້າ
ມະນຸດຖາງຖາກຖິ້ມ

ຄ.ສ ໃໝ່ຕາມການ
ຈົ່ມແຊວລະງົມຮ້ອງ
ມວນພຶກສາຫາຍຫ່າງ
ພັນໄມ້ເກືອບແປນ

❈ ໄພຈິ່ງໄດ້ຈໍ່ຈໍ້າ
ເໝືອນດັ່ງໝຶກເຜົາມັນ
ປ່າບໍ່ຄືນຄອນເຄົ້າ
ຄາວຫລັງປາງກ່ອນກີ້

ຮົມກະນ່ຳຊວງອົກ
ເຖົ່າຫົມອົມເອົ້າ
ພູມລຳເນົາເໝືອນດັ່ງ
ໜາແໜ້ນທົ່ວແຫ່ງຫົນ

❈ ຄົນເອີຍ ຮີບຟັ່ງຟ້າວ
ພໍໄດ້ອາໄສຊົມ
ໃຫ້ຊຸ່ມເຢັນຄືກີ້
ເປັນພະລັງຊ່ວຍຍູ້

ພາກັນປູກປຸກລະດົມ
ປ່າດົງດອນໄມ້
ອຸດົມດີມູນມັ່ງ
ໂລກາຮ້ອນຫ່າງໜີ ທ່ານເອີຍ!



ສຸກສະບາຍຫາຍໂຣຄາ

# ຄຸນຄ່າທາງສານອາຫານຂອງຜັກປັງ

# ໂດຍ: ສາວແອ່ນ

ຜັກປັງ ມີຊື່ເອີ້ນເປັນພາສາອັງກິດວ່າ: Malabar spinach ເປັນຜັກທີ່ມີໃບສີຂຽວເຂັ້ມ ມີກ້ານສີມ່ວງ ແລະ ສີຂຽວ ເມື່ອນຳມາປຸງແຕ່ງອາຫານແລ້ວຈະມີຄວາມເມືອກ ແຕ່ທ່ານຮູ້ບໍວ່າ ຜັກປັງມີຄຸນຄ່າທາງສານອາຫານຄືແນວໃດແດ່ ແລະ ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ຜູ້ຂຽນຈະມານຳສະເໜີຄຸນຄ່າທາງສານອາຫານຂອງຜັກປັງ ໃຫ້ບັນດາທ່ານຜູ້ອ່ານໄດ້ຮັບຮູ້ນຳກັນ ດັ່ງນີ້:

- ເບຕາແຄໂລທິນ: ຈະປ່ຽນເປັນວິຕາມິນເອໃນຮ່າງກາຍ ເຊິ່ງມີປະໂຫຍດໃນການບຳລຸງສາຍຕາ ແລະ ຊ່ວຍຮັກສາຄວາມແຂງແຮງຂອງເຍື່ອເມືອກ ແລະ ຜິວໜັງ;

- ວິຕາມິນຊີ: ເປັນວິຕາມິນທີ່ຈຳເປັນສຳລັບການສ້າງຄໍລະເຈນ ເຊິ່ງເປັນອົງປະກອບສຳຄັນຂອງຜິວໜັງ ແລະ ຊ່ວຍສ້າງພູມຄຸ້ມກັນຮ່າງກາຍໃຫ້ແຂງແຮງ;

- ແຄວຊຽມ: ຊ່ວຍໃນການສ້າງຄວາມແຂງແຮງຂອງກະດູກ, ແຂ້ວ ແລະ ຊ່ວຍປ້ອງກັນໂລກກະດູກພ່ອຍ;

- ແມກນີຊຽມ: ເປັນແຮ່ທາດທີ່ມີບົດບາດສຳຄັນຕໍ່ການເຮັດວຽກຂອງເອນຊາຍໃນຮ່າງກາຍ ມີຫລາຍກວ່າ 300 ຊະນິດ ເຊິ່ງການເຮັດວຽກຂອງລະບົບປະສາດ ແລະ ກ້າມຊີ້ນ;

- ມົວຊິນ: ເປັນສານເມືອກທີ່ຊ່ວຍໃນການສ້າງຄວາມແຂງແຮງໃຫ້ແກ່ກະເພາະ ແລະ ພູມຄຸ້ມກັນຮ່າງກາຍ.

ພ້ອມນັ້ນ, ວິຕາມິນຊີ ແລະ ເບຕ້າເຄໂລທິນທີ່ມີຫລາຍໃນຜັກຊະນິດນີ້ ຈະເຮັດໜ້າທີ່ເປັນສານຕ້ານອະນຸມູນອິດສະຫລະ ຈຶ່ງຊ່ວຍຫລຸດຜ່ອນອາການແກ່ກ່ອນໄວ ແລະ ຊ່ວຍປ້ອງກັນພະຍາດຕ່າງໆ ທີ່ຈະເກີດຂຶ້ນໃນຊີວິດປະຈຳວັນ ເຊັ່ນ: ຄວາມດັນເລືອດສູງ ແລະ ໂລກຫົວໃຈ... ນອກນັ້ນ, ຍັງມີການສຶກສາຄົ້ນພົບວ່າ ເບຕ້າເຄໂລທິນ ມີສ່ວນຊ່ວຍໃນການປ້ອງກັນມະເຮັງໃນໂພ້ງປາກ ຄົນຍີ່ປຸ່ນນິຍົມກິນຜັກປັງ ເພາະໃນຜັກປັງອຸດົມໄປດ້ວຍສານເບຕ້າເຄໂລທິນ ຈຶ່ງເຊື່ອວ່າຊ່ວຍປ້ອງກັນໂລກມະເຮັງໄດ້.

**www.sanook.com**



# ຫວຽດນາມ ຕິດອັນດັບສະຖານທີ່ນິຍົມໄປທ່ຽວທີ່ສຸດໃນອາຊີ ປີ 2022



ເວັບໄຊທ່ອງທ່ຽວທີ່ມີຊື່ສຽງໃນໂລກຂອງອາເມລິກາ (Trip-Advisor) ໄດ້ປະກາດສະຖານທີ່ທ່ອງທ່ຽວ 25 ແຫ່ງ ທີ່ໄດ້ຮັບຄວາມນິຍົມໄປທ່ຽວທີ່ສຸດຢູ່ອາຊີ ປີ 2022; ໃນນັ້ນ, ນະຄອນຫລວງຮ່າໂນ້ຍ ແມ່ນຕິດອັນດັບທີ 13 ແລະ ນະຄອນດານັງ ຕິດອັນດັບທີ 21 ເຊິ່ງນະຄອນຫລວງຮ່າໂນ້ຍ ໄດ້ຮັບການແນະນຳວ່າເປັນນະຄອນຫລວງທີ່ມີສະເໜ່, ພັດທະນາທັນສະໄໝ, ແຕ່ຍັງອະນຸລັກຮັກສາໄດ້ບັນດາປູຊະນີຍະສະຖານທີ່ມີມາແຕ່ດົນນານ ເຊັ່ນ: ໜອງນໍ້າ, ສວນສາທາລະນະ ແລະ ເສັ້ນທາງສາຍຕ່າງໆທີ່ເຕັມໄປດ້ວຍຕົ້ນໄມ້ພ້ອມກັບວິຫານ ແລະ ມີວັດວາອາຮາມຫລາຍແຫ່ງ ຍິ່ງເພີ່ມຄວາມດຶງດູດໃຈໃຫ້ແກ່ນະຄອນຫລວງຮ່າໂນ້ຍ; ສ່ວນນະຄອນດານັງ ແມ່ນເປັນສະຖານທີ່ງສະດວກສະບາຍ, ເປັນມິດ ແລະ ອາຫານການກິນທີ່ມີລົດຊາດແຊບ ແລະ ເປັນເອກະລັກ.

**ແຫລ່ງຂ່າວ: https://la.qdnd.vn**







# ສປຊ ກ່າວປະນາມ ການເຂັ່ນຂ້າປະຊາຊົນຢູ່ບວກກີນາ ຟາໂຊ

ວັນທີ 27 ພຶດສະພາ 2022, ທ່ານ Antonio Guterres ເລຂາທິການໃຫຍ່ ສປຊ ໄດ້ກ່າວປະນາມຢ່າງແຮງຕໍ່ເຫດການເຂັ່ນຂ້າປະຊາຊົນຢູ່ບວກກີນາ ຟາໂຊ ໂດຍບັນດາກຸ່ມປະກອບອາວຸດຫົວຮຸນແຮງປະຕິບັດ ເຊິ່ງທ່ານໄດ້ສະແດງຄວາມເສຍໃຈຕໍ່ກັບຄອບຄົວຜູ້ປະສົບເຄາະຮ້າຍ ແລະ ໄດ້ຮຽກຮ້ອງໃຫ້ເຈົ້າໜ້າທີ່ບວກກີນາ ຟາໂຊ ສຸມທຸກກຳລັງເພື່ອຊອກຫາ ແລະ ນຳຕົວການຂຶ້ນສານພິພາກສາໂດຍໄວ; ພ້ອມນັ້ນ, ທ່ານຍັງໄດ້ຢໍ້າຄືນຄຳໝັ້ນສັນຍາຂອງ ສປຊ ກ່ຽວກັບເລື່ອງຈະສືບຕໍ່ໜູນຊ່ວຍບວກກີນາ ຟາໂຊ ສະກັດກັ້ນການກໍ່ການຮ້າຍ, ການໃຊ້ຄວາມຮຸນແຮງ ແລະ ປົກປ້ອງປະຊາຊົນ.

ໃນວັນທີ 22 ພຶດສະພາ ຜ່ານມາ, ບັນດາກຸ່ມກໍ່ການຮ້າຍໄດ້ດຳເນີນການບຸກໂຈມຕີປະຊາຊົນຢູ່ສອງຈຸດ ຄື: Gorgadji ຂອງແຂວງ Séno, ເຂດ Sahel ແລະ Madjoari (ແຂວງ Kompienga ຢູ່ທາງທິດຕາເວັນອອກ ແລະ ສິບຂອງຜູ້ປະສົບເຄາະຮ້າຍໄດ້ຊອກເຫັນຢູ່ເຂດ Gorgadji ຢ່າງໜ້ອຍສຸດ 11 ສົບ; ກ່ອນໜ້ານັ້ນ, ມືປືນໄດ້ບຸກໂຈມຕີຄ້າຍຄືກັນນີ້ໃນວັນທີ 14 ແລະ 19 ພຶດສະພາ ຢູ່ Madjoari ເຮັດໃຫ້ປະຊາຊົນ 17 ຄົນ ແລະ ນັກຮົບ 11 ຄົນເສຍຊີວິດ.

**ແຫລ່ງຂ່າວ: vovworld.vn**









# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 37 ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບສ້າງຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກດ້ວຍລະບົບເອເລັກໂຕຣນິກ ເພື່ອເກັບກຳ, ສັງລວມ ຂໍ້ມູນກ່ຽວກັບຍານພາຫະນະທາງບົກທີ່ໄດ້ນຳມາຂຶ້ນທະບຽນ ຊຶ່ງເປັນເຄື່ອງມືພື້ນຖານທີ່ຈຳເປັນໃນການຄຸ້ມຄອງຍານພາຫະນະທາງບົກ ໃຫ້ຖືກຕ້ອງ ແລະ ຊັດເຈນ, ນຳໃຊ້ເຂົ້າໃນການ ຄົ້ນຄວ້າ, ວາງແຜນ, ວິໄຈການພັດທະນາເສດຖະກິດ-ສັງຄົມ.

ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກມີເປົ້າໝາຍນຳໃຊ້ເພື່ອ:

1. ຄວບຄຸມ, ຕິດຕາມ ກວດກາ ການເຄື່ອນໄຫວຍານພາຫະນະທາງບົກຕາມທາງຫຼວງ, ການຈະລາຈອນໃນຕົວເມືອງ, ລະຫວ່າງປະເທດ ແລະ ຜ່ານແດນ;

2. ເກັບ ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ກ່ຽວກັບຍານພາຫະນະທາງບົກ;

3. ຄຸ້ມຄອງມາດຕະຖານເຕັກນິກຍານພາຫະນະທາງບົກ;

4. ກວດກາເຕັກນິກລົດ.

**ໝວດທີ 2**

**ປ້າຍທະບຽນຍານພາຫະນະທາງບົກ**

**ມາດຕາ 38 ມາດຕະຖານປ້າຍທະບຽນຍານພາຫະນະທາງບົກ**

ປ້າຍທະບຽນຍານພາຫະນະທາງບົກແຕ່ລະປະເພດ ຕ້ອງມີມາດຕະຖານເຕັກນິກສະເພາະ ຊຶ່ງປະກອບດ້ວຍລັກສະນະ, ຂະໜາດ, ສີ, ຮູບແບບ ຕົວອັກສອນ, ຕົວເລກ, ລະຫັດ ແລະ ເຄື່ອງໝາຍ ຕາມການກຳນົດຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 39 ການຜະລິດປ້າຍທະບຽນຍານພາຫະນະທາງບົກ**

ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບຜະລິດປ້າຍທະບຽນຍານພາຫະນະທາງບົກ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຜະລິດ;

2. ຖືກຕ້ອງຕາມມາດຕະຖານປ້າຍທະບຽນຍານພາຫະນະ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ;

3. ຮັບປະກັນຄຸນນະພາບ, ສາມາດກວດສອບ ແລະ ກວດກາໄດ້ຢ່າງທັນການ;

4. ຮັບປະກັນການແຈກຢາຍໃຫ້ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເພື່ອເຮັດໃຫ້ການຕິດປ້າຍ ຖືກຕ້ອງ, ສະດວກ ແລະ ວ່ອງໄວ.

**ມາດຕາ 40 ການຕິດປ້າຍທະບຽນຍານພາຫະນະທາງບົກ**

ປ້າຍທະບຽນຍານພາຫະນະທາງບົກ ຕ້ອງຕິດໃສ່ໂຄງສ້າງຖັງລົດບ່ອນໂຮງງານຜະລິດກຳນົດ ໂດຍບໍ່ໃຫ້ມີວັດຖຸອື່ນມາປິດບັງ ຊຶ່ງເປັນສາເຫດເຮັດໃຫ້ບໍ່ສາມາດແນມເຫັນຊັດເຈນ.

ການຕິດປ້າຍທະບຽນຍານພາຫະນະທາງບົກ ໃຫ້ດຳເນີນຢູ່ໜ່ວຍງານຕິດປ້າຍ ຂອງຂະແໜງການປ້ອງກັນຄວາມສະຫງົບ ທີ່ປະຈຳຢູ່ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ.

**ໝວດທີ 3**

**ການກວດກາເຕັກນິກຍານພາຫະນະທາງບົກ**

**ມາດຕາ 41 ຮອບວຽນການກວດກາເຕັກນິກຍານພາຫະນະທາງບົກ**

ການກວດກາເຕັກນິກຍານພາຫະນະທາງບົກ ໃຫ້ດຳເນີນຢູ່ສູນກວດເຕັກນິກ ແລະ ປະຕິບັດຕາມຮອບວຽນ ດັ່ງນີ້:

1. ລົດຈັກ ແລະ ລົດເບົາ ກ່ອນຂຶ້ນທະບຽນ ຕ້ອງຜ່ານການຢັ້ງຢືນເຕັກນິກ ໃຫ້ຖືກຕ້ອງຕາມມາດຕະ ຖານທີ່ກະຊວງໂຍທາທິການ ແລະ ຂົນສົ່ງກຳນົດ. ສຳລັບລົດໃໝ່ ມີກຳນົດນຳໃຊ້ ສອງປີ, ຫຼັງຈາກນັ້ນ ໃຫ້ກວດກາເຕັກນິກຄືນທຸກປີ. ສຳລັບ ລົດນຳເຂົ້າທີ່ນຳໃຊ້ແລ້ວ ໃຫ້ກວດກາເຕັກນິກທຸກປີ;

2. ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າກ່ອນຂຶ້ນທະບຽນ ຕ້ອງຜ່ານການຢັ້ງຢືນເຕັກນິກ ໃຫ້ຖືກ ຕ້ອງຕາມມາດຕະຖານ ທີ່ກະຊວງໂຍທາທິການ ແລະຂົນສົ່ງກຳນົດ. ສຳລັບ ລົດໃໝ່ ມີກຳນົດນຳໃຊ້ ໜຶ່ງປີ, ຫຼັງຈາກນັ້ນ ໃຫ້ກວດກາເຕັກນິກຄືນທຸກ ຫົກເດືອນ. ສຳລັບລົດນຳເຂົ້າທີ່ນຳໃຊ້ແລ້ວ ໃຫ້ກວດກາເຕັກນິກທຸກ ຫົກເດືອນ.

ສູນກວດກາເຕັກນິກ ຕ້ອງມີຄວາມຮັບຜິດຊອບຕໍ່ຜົນການກວດກາເຕັກນິກຍານພາຫະນະທາງບົກທີ່ໄດ້ຜ່ານການກວດກາແລະຢັ້ງຢືນຈາກສູນຂອງຕົນ.

**ມາດຕາ 42 ການກວດກາເຕັກນິກຍານພາຫະນະທາງບົກ**

ການກວດກາເຕັກນິກຍານພາຫະນະທາງບົກ ໃຫ້ກວດກາລາຍການຕົ້ນຕໍ ດັ່ງນີ້:

1. ໂຄງສ້າງ, ຂະໜາດ ແລະ ນ້ຳໜັກ;

2. ລະບົບບັງຄັບລ້ຽວ;

3. ລະບົບ ຫ້າມລໍ້ລົດ, ຄວາມທ່ຽງສູນລໍ້, ຄວາມໄວ;

4. ລະບົບຂັບເຄື່ອນ (ຢາງ ແລະ ລໍ້);

5. ລະບົບເຄື່ອງຈັກ;

6. ທາດອາຍຄາບອນໂມນ໋ອກໄຊ໌ (CO), ໄຮໂດຣຄາບອນ (HC), ສຽງຈາກທໍ່ອາຍເສຍ;

7. ລະບົບ ໄຟຫ້າມລໍ້, ໄຟລີ່, ໄຟຕາ, ແກລົດ, ໄຟເສີມ, ເຄື່ອງສຽງ;

8. ລະບົບກວດກາຄວາມປອດໄພ ແວ່ນຂ້າງ ຊ້າຍ, ຂວາ ແລະ ຫຼັງ, ສາຍຮັດນິລະໄພ.

ສຳລັບ ລາຍລະອຽດກ່ຽວກັບມາດຕະຖານເຕັກນິກ, ຂັ້ນຕອນ ແລະ ວິ

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

7. ຜູ້ຖືກສະເໜີ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຖືກຜູ້ອື່ນສະເໜີຕໍ່ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ແກ້ໄຂທາງດ້ານບໍລິຫານວ່າຕົນເປັນຜູ້ລະເມີດກົດໝາຍ ແລະ ລະບຽບການ;

8. ຜູ້ຮ້ອງຟ້ອງ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຟ້ອງຂອງຕົນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫລື ສານປະຊາຊົນ;







| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສີງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |